# ວັນຊາດ ອົດສະຕຣາລີ 2013

ເດືອນ ມັງກອນ 26



ຕະຫຼອດ ສິບສອງເດືອນ ທີ່ຜ່ານມາ ເປັນໄລຍະ ທີ່ເຕັມໄປດ້ວຍ ຄວາມໝາຍ ແລະ ຄວາມສຳຄັນຫຼາຍ ສຳລັບ ສປປ ລາວ ແລະ ສາຍພົວພັນ ລາວ - ອົດສະຕຣາລີ.

ຂ້າພະເຈົ້າ ຂໍຖືໂອກາດນີ້ ສະແດງຄວາມ ຊົມເຊີຍ ຕໍ່ລັດຖະບານລາວ ສຳລັບ ຜົນສຳເລັດ ອັນຈົບງາມ ໃນການເປັນເຈົ້າພາບ ຈັດກອງປະຊຸມ ASEM.

ພ້ອມນີ້, ຂ້າພະເຈົ້າ ຂໍສະແດງ ຄວາມຂອບໃຈ ມາຍັງລັດຖະບານລາວ ທີ່ໄດ້ໃຫ້ການ ສະໜັບສະໜູນ ວຽກງານຕ່າງໆ ຕະຫຼອດປີທີ່ຜ່ານມາ ເພື່ອສະເຫຼີມສະຫຼອງ ຄົບຮອບ 60 ປີ ສາຍພົວພັນ ດ້ານການທູດ ລະຫວ່າງ ອົດສະຕຣາລີ ແລະ ລາວ. ລວມເຖິງ ທຸກທ່ານ ທີ່ໄດ້ຕື່ນແຕ່ເຊົ້າ ເພື່ອເຂົ້າຮ່ວມງານແລ່ນ ຂ້າມຂົວມິດຕະພາບ ລາວ-ໄທ ເຊິ່ງ ຂົວດັ່ງກ່າວ ຖືກສ້າງໂດຍລັດຖະບານອົດສະຕຣາລີ.

ນາຍົກລັດຖະມົນຕີ ຂອງ ອົດສະຕຣາລີ ພະນະທ່ານ ນາງ Julia Gillard ມີຄວາມຍິນດີຫຼາຍທີ່ໄດ້ມີໂອກາດມາຢ້ຽມຢາມ ປະເທດລາວ ໃນເດືອນ ພະຈິກ ເພື່ອເຂົ້າຮ່ວມ ກອງປະຊຸມ ASEM. ເຊັ່ນກັນ ໃນປີຜ່ານມາ ອົດສະຕຣາລີ ໄດ້ຮັບກຽດ ຕ້ອນຮັບ ການຢ້ຽມຢາມ ຢ່າງເປັນທາງການ ຂອງ ປະທານ ສະພາແຫ່ງຊາດລາວ ພະນະທ່ານ ນາງ ປານີ ຢາທໍ່ຕູ້ ແລະ ຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີ ວ່າການກະຊວງການຕ່າງປະເທດ ພະນະທ່ານ ທອງລຸນ ສີສຸລິດ.

ໃນເວລາພົບກັນ ຢ່າງເປັນທາງການ ຂອງ ນາຍົກລັດຖະມົນຕີ ສອງທ່ານ ຢູ່ ນະຄອນຫຼວງວຽງຈັນ ໃນເດືອນ ພະຈິກນັ້ນ, ນອກຈາກ ຫຼາຍຫົວຂໍ້ ສຳຄັນອື່ນໆແລ້ວທັງສອງທ່ານ ໄດ້ໃຫ້ຄວາມສຳຄັນຕໍ່ການ ເຕີບໃຫຍ່ ແລະ ເຂັ້ມແຂງຂຶ້ນຂອງສາຍພົວພັນຂອງຄົນ ລະຫວ່າງ ສອງຊາດ ຂອງພວກເຮົາ. ແລະ ໃນປີນີ້ ເນື່ອງໃນໂອກາດ ວັນຊາດ ອົດສະຕຣາລີ ຂ້າພະເຈົ້າ ຂໍຍ້ອງຍໍ ສັນລະເສີນ ທຸກທ່ານ ທີ່ມີສ່ວນ ສົ່ງເສີມເຮັດໃຫ້ວຽກງານສາຍພົວພັນ ລະຫວ່າງ ປະຊາຊົນສອງຊາດ ທີ່ສຳຄັນນີ້ເພີ່ມທະວີຂຶ້ນຕື່ມ.

ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈ ມາຍັງຄົນລາວ ທີ່ເຮັດວຽກ ຢ່າງຫ້າວຫັນ ກັບ ອົງການຈັດຕັ້ງ ແລະ ບໍລິສັດ ຂອງອົດສະຕຣາລີ ທີ່ຕັ້ງຢູ່ປະເທດລາວ, ທຸກຄົນພວມປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການພັດທະນາເສດຖະກິດ ແລະ ສັງຄົມຂອງລາວ. ແລະ ຂໍຂອບໃຈພິເສດມາຍັງຄົນລາວ ທີ່ຮຽນຈົບຈາກອົດສະຕຣາລີ ທັງຫຼາຍ ແລະ ເປັນຜູ້ສືບຕໍ່ສ້າງ ມິດຕະພາບ ອັນຍາວນານ ຕະຫຼອດມາ.

ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈ ມາຍັງ ຄົນອົດສະຕຣາລີ ທີ່ເຮັດວຽກ ແລະ ອາໃສຢູ່ໃນປະເທດລາວ, ທຸກຄົນ ທີ່ປະກອບສ່ວນຢ່າງຫ້າວຫັນ ຢູ່ຫຼາຍຂົງເຂດວຽກງານ, ຍົກຕົວຢ່າງ ອາຈານ ກຳລັງສິດສອນ ນັກຮຽນ, ທັງ ຄົນຕ່າງປະເທດ ແລະ ຄົນລາວ, ສຳລັບ ຜູ້ທີ່ ພວມເຮັດວຽກ ຢູ່ບໍລິສັດບໍ່ແຮ່ ແລະ ບໍລິສັດຕ່າງໆ ຂອງອົດສະຕຣາລີ ແມ່ນກຳລັງ ສົ່ງຕໍ່ ທັກສະຄວາມສາມາດຕ່າງໆ ແລະ ໄດ້ປະກອບສ່ວນ ດ້ານບວກ ຕໍ່ ເສດຖະກິດ ຂອງປະເທດລາວ. ຂອບໃຈຄົນອົດສະຕຣາລີ ທີ່ພວມເຮັດວຽກ ໃນໂຄງການ ດ້ານພັດທະນາຕ່າງໆ ໃນທົ່ວປະເທດລາວ ແລະ ທ້າຍສຸດ ແລະ ສຳຄັນຄືກັນ ຂໍຂອບໃຈ ອາສາສະໝັກ ອົດສະຕຣາລີ ທຸກຄົນ.

ເນື່ອງໃນໂອກາດວັນຊາດ ອົດສະຕຣາລີ ສົກປີ 2013, ຂ້າພະເຈົ້າ ຂໍກ່າວຕໍ່ ລັດຖະບານລາວ ແລະ ປະຊາຊົນລາວ ວ່າ ເຈດຈຳນົງ ຂອງອົດສະຕຣາລີ ຕໍ່ ສາຍພົວພັນ ທີ່ດີງາມ ແລະ ມິດຕະພາບ ທີ່ຍາວນານ ລະຫວ່າງ ລາວ ແລະ ອົດສະຕຣາລີ ຈະສືບຕໍ່ ເຂັ້ມແຂງ ແລະ ທ້າຍສຸດນີ້ ຂໍອວຍພອນໄຊ ໃຫ້ທຸກຄົນ ຈົ່ງມີສຸຂະພາບ ແຂງແຮງ, ມີຄວາມສຸກ ແລະ ປະສົບຜົນສຳເລັດ ຕະຫຼອດໄປ.



ພະນະທ່ານ ນາງ ຈູເລຍ ກີລາດ, ນາຍົກລັດຖະມົນຕີ ອົດສະຕຣາລີ ຢ້ຽມຢາມ ໂຮງຮຽນ ຫ້ອມເໜືອ, ເດືອນພະຈິກ 2012



ພະນະທ່ານ ດຣ. ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີລັດຖະມົນຕີວ່າການ ກະຊວງການຕ່າງປະເທດ ຢ້ຽມຢາມອົດສະຕຣາລີ ຢ່າງເປັນທາງການໃນເດືອນ ກຸມພາ 2012 ແລະ ພົບປະກັບ ພະນະທ່ານ ດຣ. ເຄຣກ ອີເມີຊັນ, ລັດຖະມົນຕີວ່າການກະຊວງການຄ້າ ແລະ ທັງເປັນ ຮັກສາການກະຊວງການຕ່າງປະເທດ ອົດສະຕຣາລີ



ປະທານ ແລະ ຮອງປະທານ ສະພາສູງອົດສະຕຣາລີ ຢ້ຽມຢາມ ສູນCOPEທີ່ໄດ້ຮັບທຶນຊ່ວຍເຫຼືອຈາກໂຄງການຊ່ວຍເຫຼືອຂອງອົດສະຕຣາລີ, ເດືອນ ຕຸລາ 2012



ພະນະທ່ານ ນາງ ລິນດາ ວໍໄທສິງ, ເອກອັກຄະລັດຖະທູດອົດສະຕຣາລີ ປະຈຳ ສປປ ລາວພ້ອມດ້ວຍ ນັກສຶກສາທີ່ໄດ້ຮັບທຶນ ຈາກລັດຖະບານອົດສະຕຣາລີ ໃນສົກປີ 2012




ຮູບພາບໂຮງງານຜະລິດ ບໍ່ຄຳບໍ່ເງິນ ໃນກາງຄືນ ທີ່ ບ້ານຫ້ວຍຊາຍ, ແຂວງ ວຽງຈັນ




